☀ ບາດກ້າວສູ່ພະລັງງານສີຂຽວທີ່ຍືນຍົງ! ຜ-ຟຟລ ເຊັນ MOU ຮ່ວມ CS TECH ພັດທະນາໂຄງການ FLOATING SOLAR ແລະ CARBON CREDIT



ໃນວັນທີ 10 ພະຈິກ 2025 ທີ່ ນະຄອນຫຼວງວຽງຈັນ, ໄດ້ມີພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອຮ່ວມກັນພັດທະນາໂຄງການພະລັງງານທີ່ສຳຄັນລະຫວ່າງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ແລະ ບໍລິສັດ CS Tech Co., Ltd.

ການລົງນາມໃນຄັ້ງນີ້ແມ່ນເພື່ອຮ່ວມມືກັນໃນສອງວຽກງານຫຼັກຄື:

1. ພັດທະນາພະລັງງານແສງຕາເວັນລອຍນ້ຳ (Floating Solar) ໃນເຂດເຂື່ອນໄຟຟ້ານ້ຳຕົກ.
2. ພັດທະນາສິນເຊື່ອຄາບອນ (Carbon Credit)





ຜູ້ເຂົ້າຮ່ວມພິທີ ໃນການເຊັນສັນຍາຄັ້ງນີ້:

- ຝ່າຍ ຜ-ຟຟລ: ນຳໂດຍ ທ່ານ ສຸກສະຫວາດ ໂສສຸພັນ, ຜູ້ອຳນວຍການໃຫຍ່ ຜ-ຟຟລ
- ຝ່າຍ ບໍລິສັດ CS Tech: ນຳໂດຍ ທ່ານ Seo Dong-myeong - Managing Director

ການຮ່ວມມືນີ້ເປັນບາດກ້າວສຳຄັນໃນການເພີ່ມປະສິດທິພາບການຜະລິດໄຟຟ້າແບບປະສົມປະສານ (Hydro-Solar Hybrid) ແລະ ເສີມສ້າງບົດບາດຂອງ ຜ-ຟຟລ ໃນການຄ້າຂາຍຄາບອນ (Carbon Trading), ເຊິ່ງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງຂອງປະເທດຊາດ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ